ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ

ເລກທີ 2597/ກຕສ
ນະຄອນຫຼວງວຽງຈັນ, ວັນທີ 12 ມິຖຸນາ 2022

# ຂໍ້ຕົກລົງ
## ວ່າດ້ວຍ ການເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນ

- ອີງຕາມ ກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ (ສະບັບປັບປຸງ) ສະບັບເລກທີ 05/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ດຳລັດວ່າດ້ວຍ ລະບົບສາຍສົ່ງໂທລະຄົມມະນາຄົມ, ສະບັບເລກທີ 01/ລບ, ລົງວັນທີ 02 ມັງກອນ 2020;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ສະບັບເລກທີ 625/ນຍ, ລົງວັນທີ 22 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງສູນອິນເຕີເນັດແຫ່ງຊາດ ສະບັບເລກທີ 832/ສອຊ, ລົງວັນທີ 18 ຕຸລາ 2021.

**ລັດຖະມົນຕີ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາວຽກງານການເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນ ພາຍໃນປະເທດ ແລະ ເຂົ້າ-ອອກຕ່າງປະເທດ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີຄວາມເປັນເອກະພາບ, ສະດວກ, ມີປະສິດທິພາບ ແລະ ມີປະສິດທິຜົນສູງ ຮັບປະກັນຄວາມຖືກຕ້ອງ, ມາດຕະຖານເຕັກນິກ ແລະ ຄວາມປອດໄພ ແນໃສ່ເຮັດໃຫ້ການເຊື່ອມຕໍ່ ແລະ ໃຫ້ບໍລິການລະຫວ່າງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ມີການລວມສູນການສື່ສານທີ່ສູນອິນເຕີເນັດແຫ່ງຊາດ ປະກອບສ່ວນພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ການເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນ

ການເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນ ແມ່ນ ການສົ່ງ ແລະ ການຮັບຂໍ້ຄວາມສັ້ນເທິງໂທລະສັບມືຖື ໂດຍຜ່ານລະບົບສູນກາງຂໍ້ຄວາມສັ້ນ, ລະບົບສູນກາງໂທລະສັບມືຖື ແລະ ສັນຍານໂທລະສັບມືຖືຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ມີການລວມສູນການສື່ສານ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຂໍ້ຄວາມສັ້ນ (Short Message Service, SMS)** ໝາຍເຖິງ ການສົ່ງຂໍ້ຄວາມຕົວອັກສອນ, ໂຕເລກ ຫຼື ສັນຍາລັກສັ້ນໆຫາກັນ ຊຶ່ງມີເນື້ອຫາຂໍ້ຄວາມ 70 ຫາ 160 ຕົວອັກສອນຕໍ່ສະບັບ ຜ່ານທາງໂທລະສັບມືຖື ຊຶ່ງສາມາດສົ່ງໄດ້ຫຼາຍວິທີ ຈາກໂທລະສັບມືຖືເຄື່ອງໜຶ່ງໄປຫາອີກເຄື່ອງໜຶ່ງ ຫຼື ສົ່ງ-ຮັບ ຈາກໂທລະສັບມືຖືກັບແອັບພິເຄຊັ່ນ;

2. **ລະບົບສູນກາງຂໍ້ຄວາມສັ້ນ (Short Message Service Center, SMSC)** ໝາຍເຖິງ ອົງປະກອບໜຶ່ງຂອງເຄືອຂ່າຍໂທລະສັບມືຖື ໂດຍເຮັດໜ້າທີ່ກໍານົດເສັ້ນທາງການ ສົ່ງ-ຮັບ ຂໍ້ຄວາມສັ້ນຈາກຕົ້ນທາງໄປຫາປາຍທາງ;

3. **ການລວມສູນການສື່ສານ** ໝາຍເຖິງ ການເຊື່ອມຕໍ່ລະບົບສູນກາງໂທລະສັບ, ລະບົບສູນກາງຂໍ້ຄວາມສັ້ນຂອງບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ເຂົ້າກັບລະບົບສູນກາງໂທລະສັບ, ລະບົບສູນກາງຂໍ້ຄວາມສັ້ນຂອງສູນອິນເຕີເນັດແຫ່ງຊາດ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເພື່ອສົ່ງ-ຮັບສັນຍານໂທລະສັບ, ຂໍ້ຄວາມສັ້ນຂ້າມເຄືອຂ່າຍພາຍໃນປະເທດ ແລະ ເຂົ້າ-ອອກຕ່າງປະເທດ;

4. **ຜູ້ເຊື່ອມຕໍ່ ແລະ ໃຫ້ບໍລິການ** ໝາຍເຖິງ ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ໃຫ້ບໍລິການໂທລະຄົມມະນາຄົມ;

5. **ຜູ້ໃຊ້ບໍລິການທີ່ເຊື່ອມຕໍ່ກັບສູນອິນເຕີເນັດແຫ່ງຊາດ** ໝາຍເຖິງ ນິຕິບຸກຄົນ ຫຼື ອົງການຈັດຕັ້ງທີ່ໄດ້ຮັບອະນຸຍາດຈາກກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໃນການເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນ ໂດຍນໍາໃຊ້ລະບົບສູນກາງຂໍ້ຄວາມສັ້ນຂອງສູນອິນເຕີເນັດແຫ່ງຊາດ;

6. **ຜູ້ໃຊ້ບໍລິການ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນທີ່ນໍາໃຊ້ການບໍລິການຂໍ້ຄວາມສັ້ນຈາກຜູ້ໃຫ້ບໍລິການ;

7. **Signaling Point Code** ໝາຍເຖິງ ລະຫັດສູນກາງໂທລະສັບ ຫຼື ລະຫັດທີ່ໃຊ້ໃນການລະບຸຈຸດສົ່ງ-ຮັບສັນຍານ ແລະ ການປະມວນຜົນໃນສ່ວນຂອງການສົ່ງຂໍ້ຄວາມຂອງແຕ່ລະຈຸດ;

8. **ການເຊື່ອມຕໍ່ແບບ Signaling System No.7 ຫຼື SS7** ໝາຍເຖິງ ການເຊື່ອມຕໍ່ລະຫວ່າງລະບົບສູນກາງຂໍ້ຄວາມສັ້ນ ຜ່ານລະຫັດຂອງສັນຍານເຄືອຂ່າຍໂທລະສັບມືຖື;

9. **ການເຊື່ອມຕໍ່ແບບ Short Message Peer-to-Peer ຫຼື SMPP** ໝາຍເຖິງ Protocol ທີ່ໃຊ້ໃນການສົ່ງຂໍ້ຄວາມສັ້ນຈາກແອັບພິເຄຊັ່ນ ຜ່ານສູນກາງຂໍ້ຄວາມສັ້ນຫາປາຍທາງ;

10. **ການເຊື່ອມຕໍ່ແບບ Sigtran over M3UA** ໝາຍເຖິງ ຮູບແບບການເຊື່ອມຕໍ່ຜ່ານເລກໝາຍອິນເຕີເນັດ ບົນພື້ນຖານລະຫັດສັນຍານໂທລະສັບລະຫວ່າງສູນກາງຂໍ້ຄວາມສັ້ນຫາສູນກາງໂທລະສັບ;

11. **ການສົ່ງ-ຮັບຂໍ້ຄວາມສັ້ນຜ່ານເສັ້ນທາງບໍ່ຖືກຕ້ອງ (Fraud)** ໝາຍເຖິງ ບັນດາສັນຍານຂໍ້ຄວາມສັ້ນ ທີ່ຖືກ ສົ່ງ-ຮັບ ໂດຍຜ່ານເສັ້ນທາງການເຊື່ອມຕໍ່ທີ່ບໍ່ໄດ້ຮັບອະນຸຍາດ ແລະ ບໍ່ຜ່ານການລວມສູນການສື່ສານ;

12. **ລະບົບກວດກາສັນຍານຂໍ້ຄວາມສັ້ນ (SMS Firewall)** ໝາຍເຖິງ ລະບົບທີ່ໃຊ້ໃນການກວດກາ, ກັ່ນກອງ, ອະນຸຍາດ ຫຼື ປິດກັ້ນການຜ່ານເຂົ້າ-ອອກຂອງຂໍ້ຄວາມສັ້ນ.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບນິຕິບຸກຄົນ ຫຼື ອົງການຈັດຕັ້ງທີ່ເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນພາຍໃນປະເທດ ແລະ ເຂົ້າ-ອອກຕ່າງປະເທດ ຢູ່ ສປປ ລາວ.

## ໝວດທີ 2
## ການເຊື່ອມຕໍ່ ແລະ ໃຫ້ບໍລິການ

**ມາດຕາ 5 ຮູບແບບການເຊື່ອມຕໍ່ຂໍ້ຄວາມສັ້ນ**

ການເຊື່ອມຕໍ່ຂໍ້ຄວາມສັ້ນ ມີ 02 ຮູບແບບ ດັ່ງນີ້:

1. ການເຊື່ອມຕໍ່ລະບົບສູນກາງຂໍ້ຄວາມສັ້ນພາຍໃນປະເທດ;
2. ການເຊື່ອມຕໍ່ລະບົບສູນກາງຂໍ້ຄວາມສັ້ນຕ່າງປະເທດ.

**ມາດຕາ 6 ການເຊື່ອມຕໍ່ລະບົບສູນກາງຂໍ້ຄວາມສັ້ນພາຍໃນປະເທດ**

ການເຊື່ອມຕໍ່ລະບົບສູນກາງຂໍ້ຄວາມສັ້ນພາຍໃນປະເທດ ແມ່ນ ການເຊື່ອມຕໍ່ລະບົບສູນກາງຂໍ້ຄວາມສັ້ນຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມຈາກເຄືອຂ່າຍໜຶ່ງ ໄປຫາລະບົບສູນກາງຂໍ້ຄວາມສັ້ນຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມຂອງເຄືອຂ່າຍອື່ນ ໂດຍຜ່ານລະບົບສູນກາງຂໍ້ຄວາມສັ້ນພາຍໃນປະເທດ (National Short Message Service Exchange ຫຼື SMSX) ຂອງສູນອິນເຕີເນັດແຫ່ງຊາດ ເພື່ອແລກປ່ຽນຂໍ້ມູນຂ່າວສານໃນຮູບແບບຂໍ້ຄວາມສັ້ນລະຫວ່າງເຄືອຂ່າຍຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມພາຍໃນປະເທດ ໃຫ້ມີຄວາມຖືກຕ້ອງ, ວ່ອງໄວ ແລະ ປອດໄພ.

**ມາດຕາ 7 ການເຊື່ອມຕໍ່ລະບົບສູນກາງຂໍ້ຄວາມສັ້ນຕ່າງປະເທດ**

ການເຊື່ອມຕໍ່ລະບົບສູນກາງຂໍ້ຄວາມສັ້ນຕ່າງປະເທດ ແມ່ນ ການເຊື່ອມຕໍ່ຜ່ານລະບົບສູນກາງຂໍ້ຄວາມສັ້ນຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມພາຍໃນປະເທດ ກັບລະບົບສູນກາງຂໍ້ຄວາມສັ້ນຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມຕ່າງປະເທດ ໂດຍຜ່ານລະບົບສູນກາງຂໍ້ຄວາມສັ້ນຕ່າງປະເທດ (International Short Message Service Gateway ຫຼື SMSG) ຂອງສູນອິນເຕີເນັດແຫ່ງຊາດ ເພື່ອລວມສູນການສື່ສານລະຫວ່າງເຄືອຂ່າຍຂໍ້ຄວາມສັ້ນເຂົ້າ-ອອກຕ່າງປະເທດ ເພື່ອຮັບປະກັນການແລກປ່ຽນຂໍ້ມູນຂ່າວສານໃນຮູບແບບຂໍ້ຄວາມສັ້ນ ເຂົ້າ-ອອກຕ່າງປະເທດໃຫ້ມີຄວາມຖືກຕ້ອງ, ວ່ອງໄວ ແລະ ປອດໄພ.

**ມາດຕາ 8 ປະເພດການສົ່ງ-ຮັບຂໍ້ຄວາມສັ້ນ**

ປະເພດການສົ່ງ-ຮັບຂໍ້ຄວາມສັ້ນ ມີ 04 ປະເພດ ດັ່ງນີ້:

1. Person to Person ຫຼື P2P ແມ່ນ ການໃຫ້ບໍລິການສົ່ງ-ຮັບຂໍ້ຄວາມສັ້ນລະຫວ່າງຜູ້ໃຊ້ບໍລິການກັບຜູ້ໃຊ້ບໍລິການນຳກັນ;

2. Application to Person ຫຼື A2P ແມ່ນ ການໃຫ້ບໍລິການສົ່ງຂໍ້ຄວາມສັ້ນຈາກແອັບພິເຄຊັ່ນຫາຜູ້ໃຊ້ບໍລິການ ເປັນຕົ້ນ ຂໍ້ຄວາມສັ້ນສຳລັບການລົງທະບຽນ, ການຢັ້ງຢືນຕົວຕົນທາງອອນລາຍ (One-Time Password ຫຼື OTP), ຂໍ້ຄວາມສັ້ນສຳລັບການແຈ້ງເຕືອນ (Alert Messaging), ຂໍ້ຄວາມສັ້ນສຳລັບການຢືນຢັນການສັ່ງຈອງຈາກຜູ້ໃຫ້ບໍລິການ (Booking Confirmations), ຂໍ້ຄວາມສັ້ນສຳລັບການໂຄສະນາສິນຄ້າ (Advertising Message);

3. Person to Application ຫຼື P2A ແມ່ນ ການໃຫ້ບໍລິການສົ່ງຂໍ້ຄວາມສັ້ນຈາກຜູ້ໃຊ້ບໍລິການຫາແອັບພິເຄຊັ່ນ ເປັນຕົ້ນ ຂໍ້ຄວາມສັ້ນສໍາລັບການລົງຄະແນນສຽງ (TV Voting Competitions), ຂໍ້ຄວາມສັ້ນສໍາລັບການຊື້ຫວຍອອນລາຍ (SMS Lottery);

4. Application to Application ຫຼື A2A ແມ່ນ ການໃຫ້ບໍລິການສົ່ງຂໍ້ຄວາມສັ້ນຈາກແອັບພິເຄຊັ່ນຫາແອັບພິເຄຊັ່ນ ເປັນຕົ້ນ ຂໍ້ຄວາມສັ້ນລະຫວ່າງອຸປະກອນ (Internet of Thing, IoT), ຂໍ້ຄວາມສັ້ນຈາກໝໍ້ນັບທັນສະໄໝ (Smart Meter).

**ມາດຕາ 9 ປະເພດການໃຫ້ບໍລິການຂໍ້ຄວາມສັ້ນ**

ການໃຫ້ບໍລິການຂໍ້ຄວາມສັ້ນ ແບ່ງອອກເປັນ 03 ປະເພດ ດັ່ງນີ້:

1. ການໃຫ້ບໍລິການຂໍ້ຄວາມສັ້ນພາຍໃນເຄືອຂ່າຍ (On-net) ແມ່ນ ການໃຫ້ບໍລິການສົ່ງ-ຮັບຂໍ້ຄວາມສັ້ນລະຫວ່າງ ຜູ້ໃຊ້ບໍລິການກັບຜູ້ໃຊ້ບໍລິການພາຍໃນເຄືອຂ່າຍໂທລະສັບມືຖື ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມດຽວກັນ;

2. ການໃຫ້ບໍລິການຂໍ້ຄວາມສັ້ນຂ້າມເຄືອຂ່າຍ (Off-net) ແມ່ນ ການໃຫ້ບໍລິການສົ່ງ-ຮັບຂໍ້ຄວາມສັ້ນລະຫວ່າງ ຜູ້ໃຊ້ບໍລິການກັບຜູ້ໃຊ້ບໍລິການຂ້າມເຄືອຂ່າຍໂທລະສັບມືຖື ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມຕ່າງກັນ ໂດຍຜ່ານລະບົບສູນກາງໂທລະສັບ, ລະບົບສູນກາງຂໍ້ຄວາມສັ້ນ ພາຍໃນປະເທດຂອງສູນອິນເຕີເນັດແຫ່ງຊາດ;

3. ການໃຫ້ບໍລິການຂໍ້ຄວາມສັ້ນຈາກລະບົບສູນກາງຂໍ້ຄວາມສັ້ນຂອງສູນອິນເຕີເນັດແຫ່ງຊາດ ແມ່ນ ການໃຫ້ບໍລິການສົ່ງ-ຮັບຂໍ້ຄວາມສັ້ນ ໂດຍນໍາໃຊ້ລະບົບສູນກາງຂໍ້ຄວາມສັ້ນຂອງສູນອິນເຕີເນັດແຫ່ງຊາດ ໄປຫາຜູ້ໃຊ້ບໍລິການທີ່ຢູ່ພາຍໃນປະເທດ ເທິງເຄືອຂ່າຍໂທລະສັບມືຖືຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ.

ສູນອິນເຕີເນັດແຫ່ງຊາດ ສະໜອງການໃຫ້ບໍລິການຂໍ້ຄວາມສັ້ນຈາກລະບົບຂໍ້ຄວາມສັ້ນຂອງຕົນ ເພື່ອຮັບໃຊ້ວຽກງານຂອງອົງການຈັດຕັ້ງ ພັກ-ລັດ ແລະ ສັງຄົມ ເປັນຕົ້ນ ການກະຈາຍຂ່າວສານທາງລັດຖະການ, ການແຈ້ງເຕືອນ, ການແຈ້ງເຫດສຸກເສີນ, ການຕອບຕ້ານໄພພິບັດ, ການຕອບຕ້ານພະຍາດລະບາດ.

## ໝວດທີ 3
## ການຂໍອະນຸຍາດເຊື່ອມຕໍ່ ແລະ ໃຫ້ບໍລິການ

**ມາດຕາ 10 ການຂໍອະນຸຍາດເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນພາຍໃນປະເທດ ແລະ ເຂົ້າ-ອອກຕ່າງປະເທດ**

ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ມີຈຸດປະສົງຕ້ອງການເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນຂອງຕົນເຂົ້າກັບລະບົບສູນກາງຂໍ້ຄວາມສັ້ນພາຍໃນປະເທດ ແລະ ຕ່າງປະເທດຂອງສູນອິນເຕີເນັດແຫ່ງຊາດ ຕ້ອງໄດ້ຮັບອະນຸຍາດຈາກກະຊວງ ເຕັກໂນໂລຊີ ແລະ ການສື່ສານ.

**ມາດຕາ 11 ການປະກອບເອກະສານຂໍອະນຸຍາດເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນ**

ການປະກອບເອກະສານຂໍອະນຸຍາດເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນ ມີ ດັ່ງນີ້:

1. ໜັງສືສະເໜີ ຂໍອະນຸຍາດເຊື່ອມຕໍ່ ແລະ ໃຫ້ບໍລິການ ຂໍ້ຄວາມສັ້ນ;

2. ສໍາເນົາໃບທະບຽນວິສາຫະກິດ;

3. ບົດວິພາກເຕັກນິກ;

4. ປະຫວັດການເຄື່ອນໄຫວຂອງອົງກອນ;

5. ປະຕິບັດຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 12 ການພິຈາລະນາການຂໍອະນຸຍາດເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ພິຈາລະນາການອະນຸຍາດໃຫ້ຜູ້ຮ້ອງຂໍການເຊື່ອມຕໍ່ເຄືອຂ່າຍຂໍ້ຄວາມສັ້ນ ພາຍໃນກຳນົດເວລາ ເຈັດວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານຄຳຮ້ອງຂໍທີ່ຖືກຕ້ອງ, ຄົບຖ້ວນ ແລະ ມີເງື່ອນໄຂຕາມທີ່ໄດ້ກຳນົດ ເປັນຕົ້ນໄປ.

ໃນກໍລະນີ ຫາກເຫັນວ່າເອກະສານບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ແລະ ບໍ່ມີເງື່ອນໄຂ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍຮັບຊາບພາຍໃນເວລາກຳນົດ ຫ້າວັນ ລັດຖະການ.

**ມາດຕາ 13 ເງື່ອນໄຂການເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນພາຍໃນປະເທດ ແລະ ເຂົ້າ-ອອກຕ່າງປະເທດ**

ການເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນພາຍໃນປະເທດ ແລະ ເຂົ້າ-ອອກຕ່າງປະເທດກັບສູນອິນເຕີເນັດແຫ່ງຊາດ ຕ້ອງປະຕິບັດ ດັ່ງນີ້:

1. ເປັນຜູ້ໃຫ້ບໍລິການໂທລະຄົມມະນາຄົມທີ່ໄດ້ຮັບອະນຸຍາດຈາກ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ;

2. ຜູ້ໃຫ້ບໍລິການ ຕ້ອງໄດ້ປະຕິບັດຕາມມາດຕະຖານເຕັກນິກທີ່ໄດ້ກຳນົດໄວ້ໃນ ມາດຕາ 15 ຂອງຂໍ້ຕົກລົງສະບັບນີ້;

3. ຮັບປະກັນໃຫ້ທັງສອງລະບົບສາມາດເຊື່ອມຕໍ່ເຂົ້າກັນໄດ້ ແລະ ບໍ່ສ້າງຄວາມເສຍຫາຍໃຫ້ແກ່ລະບົບຂອງສູນອິນເຕີເນັດແຫ່ງຊາດ;

4. ມີແຜນວາດການເຊື່ອມຕໍ່ທາງດ້ານເຕັກນິກ ແລະ ເອກະສານທີ່ກ່ຽວຂ້ອງກັບຄຸນລັກສະນະລະບົບອຸປະກອນເຕັກນິກ;

5. ຜູ້ໃຫ້ບໍລິການ ທີ່ເຊົ່າໃຊ້ໂຄງລ່າງພື້ນຖານຂອງເຄືອຂ່າຍຜູ້ໃຫ້ບໍລິການໂທລະຄົມມະນາຄົມ ເພື່ອໃຫ້ບໍລິການ (Mobile Virtual Network Operator ຫຼື MVNO) ໃຫ້ນຳໃຊ້ການເຊື່ອມຕໍ່ຂໍ້ຄວາມສັ້ນ ທີ່ເຊື່ອມຕໍ່ກັບລະບົບສູນກາງຂໍ້ຄວາມສັ້ນຂອງສູນອິນເຕີເນັດແຫ່ງຊາດ.

**ມາດຕາ 14 ການຂໍອະນຸຍາດເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນຈາກລະບົບສູນກາງຂໍ້ຄວາມສັ້ນຂອງສູນອິນເຕີເນັດແຫ່ງຊາດ**

ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ມີຈຸດປະສົງຂໍອະນຸຍາດເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນ ຜ່ານລະບົບສູນກາງຂໍ້ຄວາມສັ້ນຂອງສູນອິນເຕີເນັດແຫ່ງຊາດ ຕ້ອງໄດ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ໜັງສືສະເໜີຂໍອະນຸຍາດເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນ ຈາກລະບົບສູນກາງຂໍ້ຄວາມສັ້ນຂອງສູນອິນເຕີເນັດແຫ່ງຊາດ;

2. ສຳລັບອົງການຈັດຕັ້ງພັກ-ລັດ ແມ່ນສຳເນົາດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕົນ;

3. ສຳເນົາໃບທະບຽນວິສາຫະກິດ;

4. ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນສັນຍາເຊົ່າໃຊ້ລະບົບສູນກາງຂໍ້ຄວາມສັ້ນ ພາຍໃນຂອງສູນອິນເຕີເນັດແຫ່ງຊາດ;

5. ປະຕິບັດຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.



ໍu

# ໝວດທີ 4
# ມາດຕະຖານດ້ານເຕັກນິກ ແລະ ຄວາມປອດໄພ

**ມາດຕາ 15 ມາດຕະຖານດ້ານເຕັກນິກການເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນພາຍໃນປະເທດ ແລະ ເຂົ້າ-ອອກຕ່າງປະເທດ**

ມາດຕະຖານດ້ານເຕັກນິກການເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນພາຍໃນປະເທດ ແລະ ເຂົ້າ-ອອກຕ່າງປະເທດ ມີ ດັ່ງນີ້:

1. **ມາດຕະຖານອຸປະກອນ:** ເປັນອຸປະກອນເຊີເວີ ສໍາລັບຕິດຕັ້ງບັນດາຊອບແວຂອງລະບົບສູນກາງຂໍ້ຄວາມສັ້ນທີ່ສາມາດຮອງຮັບການເຊື່ອມຕໍ່ສາຍໃຍແສງ 1*GE ແລະ ສາມາດຕິດຕັ້ງເລກໝາຍອິນເຕີເນັດຣຸ່ນທີ 4 (IPv4) ແລະ ຣຸ່ນທີ 6 (IPv6);

2. **ມາດຕະຖານລະບົບສາຍສົ່ງໂທລະຄົມມະນາຄົມ ມີ ດັ່ງນີ້:**

- ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ທີ່ມີລະບົບສາຍສົ່ງໂທລະຄົມມະນາຄົມເປັນຂອງຕົນເອງ ສາມາດນໍາໃຊ້ສາຍສົ່ງດັ່ງກ່າວ ໃນການເຊື່ອມຕໍ່ກັບລະບົບສູນກາງຂໍ້ຄວາມສັ້ນພາຍໃນປະເທດ ແລະ ຕ່າງປະເທດຂອງສູນອິນເຕີເນັດແຫ່ງຊາດໄດ້;
- ເຄືອຂ່າຍຂອງບັນດາອົງການຈັດຕັ້ງລັດ ແລະ ເອກະຊົນ ທີ່ບໍ່ມີລະບົບສາຍສົ່ງໂທລະຄົມມະນາຄົມ ເປັນຂອງຕົນເອງ ແມ່ນ ໃຫ້ເຊົ່າໃຊ້ລະບົບສາຍສົ່ງໂທລະຄົມມະນາຄົມຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ມາເຊື່ອມຕໍ່ກັບລະບົບສູນກາງຂໍ້ຄວາມສັ້ນພາຍໃນປະເທດຂອງສູນອິນເຕີເນັດແຫ່ງຊາດໄດ້;
- ຕ້ອງຮັບປະກັນການເຊື່ອມຕໍ່ທີ່ເປັນເສັ້ນທາງຫຼັກ ແລະ ເສັ້ນທາງສໍາຮອງ;
- ສາມາດເຊື່ອມຕໍ່ດ້ວຍສາຍໃຍແສງ ຫຼື ຜ່ານລະບົບເຄື່ອງສົ່ງ.

3. **ມາດຕະຖານການເຊື່ອມຕໍ່ ມີ ດັ່ງນີ້:**

- ຕ້ອງມີລະຫັດ Signaling Point Code (SPC) ຕາມການອະນຸມັດຈາກກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ເລກໝາຍສູນກາງຂໍ້ຄວາມສັ້ນ (Global Title, GT) ເປັນຂອງຕົນເອງສໍາລັບການເຊື່ອມຕໍ່ແບບ SS7;
- ຕ້ອງມີເລກໝາຍອິນເຕີເນັດເປັນຂອງຕົນເອງ ສໍາລັບການເຊື່ອມຕໍ່ແບບ Short Message Peer-to-Peer (SMPP), Sigtran over MTP Level 3 User Adaptation Layer (Sigtran over M3UA).

**ມາດຕາ 16 ຄວາມປອດໄພການເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນພາຍໃນປະເທດ ແລະ ເຂົ້າ-ອອກຕ່າງປະເທດ**

ຄວາມປອດໄພການເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນພາຍໃນປະເທດ ແລະ ເຂົ້າ-ອອກຕ່າງປະເທດ ມີ ດັ່ງນີ້:

1. ຜູ້ໃຫ້ບໍລິການໂທລະຄົມມະນາຄົມຕ້ອງຮັບປະກັນຄວາມຖືກຕ້ອງ ແລະ ຄວາມປອດໄພໃນການຮັບ-ສົ່ງຂໍ້ມູນບໍ່ໃຫ້ມີການບໍລິການຂໍ້ຄວາມສັ້ນທີ່ເປັນການສໍ້ໂກງ, ການຫຼອກລວງ, ກໍ່ຄວາມເສຍຫາຍ ຕໍ່ຜູ້ໃຊ້ບໍລິການ;

2. ຕ້ອງຮັບປະກັນຄວາມປອດໄພຂອງຂໍ້ມູນທັງໝົດບໍ່ໃຫ້ຖືກທໍາລາຍ, ເກີດຄວາມເສຍຫາຍ, ປ່ຽນແປງ ຫຼື ຖືກໂຈລະກໍາ;

3. ຕ້ອງມີການສໍາຮອງຂໍ້ມູນເກັບໄວ້ ເກົ້າສິບວັນ ເພື່ອຮັບປະກັນໃຫ້ນໍາໃຊ້ໄດ້ຢ່າງເປັນປົກກະຕິ ແລະ ມີການປ້ອງກັນເຫດການທີ່ອາດຈະເກີດຂຶ້ນ ເຊັ່ນ: ອັກຄີໄພ, ນໍ້າຖ້ວມ ແລະ ໄພທໍາມະຊາດອື່ນໆ;

4. ຜູ້ທີ່ມາເຊື່ອມຕໍ່ ແລະ ໃຫ້ບໍລິການ ຂໍ້ຄວາມສັ້ນຜ່ານສູນອິນເຕີເນັດແຫ່ງຊາດ ຕ້ອງຮັບປະກັນການຕິດຕາມ, ກວດກາ ແລະ ແກ້ໄຂ ສັນຍານຂໍ້ຄວາມສັ້ນທີ່ເປັນຂໍ້ຄວາມລົບກວນ, ຂໍ້ຄວາມໂຈມຕີ, ຂໍ້ຄວາມໂຄສະນາຊວນເຊື່ອ ເພື່ອຫຼອກລວງສ້າງຄວາມເສຍຫາຍໃຫ້ແກ່ຜູ້ໃຊ້ບໍລິການ.

## ໝວດທີ 5
## ສິດ ແລະ ພັນທະ

### ມາດຕາ 17 ສິດ ແລະ ພັນທະ ຂອງສູນອິນເຕີເນັດແຫ່ງຊາດ

ສູນອິນເຕີເນັດແຫ່ງຊາດ ມີສິດ ແລະ ພັນທະ ໃນການສະໜອງການບໍລິການຂໍ້ຄວາມສັ້ນຈາກລະບົບສູນກາງຂໍ້ຄວາມສັ້ນຂອງຕົນ ດັ່ງນີ້:

1. ເຮັດສັນຍາກັບຜູ້ໃຫ້ບໍລິການໂທລະຄົມມະນາຄົມ ເພື່ອເຊື່ອມຕໍ່ ແລະ ສະໜອງການບໍລິການລະບົບສູນກາງໂທລະສັບ, ລະບົບສູນກາງຂໍ້ຄວາມສັ້ນ;

2. ກວດກາບັນດາຂໍ້ຄວາມສັ້ນ ໂດຍນຳໃຊ້ລະບົບກວດກາສັນຍານຂໍ້ຄວາມສັ້ນ (SMS Firewall);

3. ສະໜອງການບໍລິການຂໍ້ຄວາມສັ້ນຈາກລະບົບສູນກາງຂໍ້ຄວາມສັ້ນຂອງສູນອິນເຕີເນັດແຫ່ງຊາດ ຕາມການອະນຸຍາດຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ;

4. ສະໜອງຂໍ້ມູນການເຊື່ອມຕໍ່ໃຫ້ແກ່ຜູ້ຂໍເຊື່ອມຕໍ່ເຄືອຂ່າຍຂໍ້ຄວາມສັ້ນ;

5. ຮັກສາຂໍ້ມູນເປັນຄວາມລັບ ແລະ ປອດໄພ, ຍົກເວັ້ນກໍລະນີ ມີຄຳສັ່ງຈາກອົງການຈັດຕັ້ງທີ່ມີສິດອຳນາດກ່ຽວຂ້ອງ;

6. ເກັບຄ່າບໍລິການກັບຜູ້ໃຊ້ບໍລິການທີ່ເຊື່ອມຕໍ່ກັບສູນອິນເຕີເນັດແຫ່ງຊາດ ຕາມທີ່ລະບຸໄວ້ໃນສັນຍາ ແລະ ຊຳລະຄ່າບໍລິການເຊື່ອມຕໍ່ການສົ່ງຂໍ້ຄວາມສັ້ນ ແກ່ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ເພື່ອສະໜອງການບໍລິການຂໍ້ຄວາມສັ້ນຈາກລະບົບສູນກາງຂໍ້ຄວາມສັ້ນຂອງຕົນ;

7. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 18 ສິດ ແລະ ພັນທະຂອງຜູ້ເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນພາຍໃນປະເທດ ແລະ ເຂົ້າ-ອອກ ຕ່າງປະເທດ

ຜູ້ເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນພາຍໃນປະເທດ ແລະ ເຂົ້າ-ອອກ ຕ່າງປະເທດ ມີສິດ ແລະ ພັນທະ ດັ່ງນີ້:

1. ສະເໜີຂໍເຊື່ອມຕໍ່, ໂຈະ ຫຼື ຍຸບເລີກການເຊື່ອມຕໍ່ກັບລະບົບສູນກາງໂທລະສັບ, ລະບົບສູນກາງຂໍ້ຄວາມສັ້ນຂອງສູນອິນເຕີເນັດແຫ່ງຊາດ;

2. ສົ່ງສັນຍານບໍລິມາດຂໍ້ຄວາມສັ້ນຂອງຕົນ ຜ່ານລະບົບກວດກາສັນຍານຂໍ້ຄວາມສັ້ນ ສູນອິນເຕີເນັດແຫ່ງຊາດ;

3. ສະໜອງຂໍ້ມູນການເຊື່ອມຕໍ່ໃຫ້ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເປັນແຕ່ລະໄລຍະ;

4. ສະເໜີເພື່ອປັບປຸງສັນຍາ ແລະ ລະບຽບການທີ່ເຫັນວ່າບໍ່ສອດຄ່ອງໃນແຕ່ລະໄລຍະ;

5. ໃຫ້ຄວາມຮ່ວມມືຕໍ່ພະນັກງານ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໃນການຕິດຕາມການເຊື່ອມຕໍ່ ແລະ ໃຫ້ບໍລິການ;



Ch

6. ຮັບປະກັນທາງດ້ານເຕັກນິກໃນການເຊື່ອມຕໍ່ ແລະ ໃຫ້ບໍລິການເຄືອຂ່າຍຂໍ້ຄວາມສັ້ນ ໃຫ້ໄດ້ຄຸນນະພາບ ຕາມເງື່ອນໄຂມາດຕະຖານເຕັກນິກທີ່ໄດ້ກຳນົດໄວ້;

7. ຮັກສາຂໍ້ມູນເປັນຄວາມລັບ ແລະ ປອດໄພ, ຍົກເວັ້ນກໍລະນີ ມີຄຳສັ່ງຈາກອົງການຈັດຕັ້ງທີ່ມີສິດອຳນາດ ກ່ຽວຂ້ອງ;

8. ປະກອບສ່ວນເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ລາຍງານຂໍ້ມູນທີ່ເຫັນວ່າມີ ຜົນກະທົບຕໍ່ຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນອັນຕະລາຍຕໍ່ສັງຄົມ;

9. ຊຳລະຄ່າທຳນຽມ ແລະ ຄ່າບໍລິການ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

10. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 19 ສິດ ແລະ ພັນທະ ຜູ້ໃຊ້ບໍລິການທີ່ເຊື່ອມຕໍ່ກັບສູນອິນເຕີເນັດແຫ່ງຊາດ**

ຜູ້ໃຊ້ບໍລິການທີ່ເຊື່ອມຕໍ່ກັບສູນອິນເຕີເນັດແຫ່ງຊາດ ມີສິດ ແລະ ພັນທະ ດັ່ງນີ້:

1. ສະເໜີນຳໃຊ້ລະບົບສູນກາງຂໍ້ຄວາມສັ້ນຂອງສູນອິນເຕີເນັດແຫ່ງຊາດ ຕາມການອະນຸຍາດຈາກກະຊວງ ເຕັກໂນໂລຊີ ແລະ ການສື່ສານ;

2. ເຊັນສັນຍາ ແລະ ນຳໃຊ້ລະບົບສູນກາງຂໍ້ຄວາມສັ້ນຂອງສູນອິນເຕີເນັດແຫ່ງຊາດ ເພື່ອສົ່ງຂໍ້ຄວາມສັ້ນ ຫາຜູ້ໃຊ້ບໍລິການທີ່ຢູ່ເຄືອຂ່າຍຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ;

3. ໂຈະ ຫຼື ຍຸບເລີກ ສັນຍາການເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນຂອງຕົນ;

4. ຊຳລະຄ່າບໍລິການເຊົ່າໃຊ້ລະບົບສູນກາງຂໍ້ຄວາມສັ້ນຂອງສູນອິນເຕີເນັດແຫ່ງຊາດ ຕາມທີ່ກຳນົດໄວ້ໃນ ສັນຍາ;

5. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ສັນຍາ.

**ມາດຕາ 20 ສິດ ແລະ ພັນທະ ຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການ ມີສິດ ແລະ ພັນທະ ດັ່ງນີ້:

1. ເລືອກໃຊ້ບໍລິການຂໍ້ຄວາມສັ້ນ ນຳບັນດາຜູ້ໃຫ້ບໍລິການ ພາຍໃນ ສປປ ລາວ;

2. ຊົມໃຊ້ຕາມຈຸດປະສົງຂອບເຂດສິດ ທີ່ໄດ້ຮັບອະນຸຍາດ;

3. ທວງຖາມ ແລະ ຮ້ອງຟ້ອງຜູ້ໃຫ້ບໍລິການຕາມຂັ້ນຕອນຂະບວນການຍຸຕິທຳ ເພື່ອໃຫ້ຄວາມເປັນທຳຕໍ່ຜູ້ ໃຊ້ບໍລິການ;

4. ກໍລະນີຢຸດການນຳໃຊ້ ຕ້ອງແຈ້ງຕໍ່ຜູ້ໃຫ້ບໍລິການຢ່າງທັນການ;

5. ຊຳລະຄ່າບໍລິການເຊົ່າໃຊ້ຂໍ້ຄວາມສັ້ນ ໃຫ້ຜູ້ໃຫ້ບໍລິການຂໍ້ຄວາມສັ້ນ;

6. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 21 ຂໍ້ຫ້າມທົ່ວໄປ**

ຫ້າມນິຕິບຸກຄົນ ຫຼື ອົງການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນໂດຍກົງຫາກັນເອງ ລະຫວ່າງເຄືອຂ່າຍພາຍໃນປະເທດ ແລະ ໂດຍກົງເຂົ້າ-ອອກຕ່າງປະເທດ ທີ່ບໍ່ຜ່ານຫຼັກການ ການລວມສູນການສື່ສານ ທີ່ສູນອິນເຕີເນັດແຫ່ງຊາດ;

2. ບໍລິການຂໍ້ຄວາມສັ້ນທີ່ເປັນການສໍ້ໂກງ, ການຫຼອກລວງ, ກໍ່ຄວາມເສຍຫາຍ ຕໍ່ຜູ້ໃຊ້ບໍລິການ;

3. ບໍລິການຂໍ້ຄວາມສັ້ນທີ່ເປັນການລົບກວນ, ຂໍ້ຄວາມໂຈມຕີ, ຂໍ້ຄວາມໂຄສະນາຊວນເຊື່ອ ເພື່ອຫຼອກລວງ ສ້າງຄວາມເສຍຫາຍໃຫ້ແກ່ຜູ້ໃຊ້ບໍລິການ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 22 ຂໍ້ຫ້າມສຳລັບສູນອິນເຕີເນັດແຫ່ງຊາດ**

ຫ້າມສູນອິນເຕີເນັດແຫ່ງຊາດ ມີພຶດຕິກຳ ດັ່ງນີ້:

1. ປ່ຽນແປງ ຫຼື ເປີດເຜີຍຂໍ້ມູນລັບໃຫ້ບຸກຄົນ ຫຼື ພາກສ່ວນອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ເຊື່ອມຕໍ່ ຍົກເວັ້ນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ມີການອະນຸມັດຈາກກະຊວງ ເຕັກໂນໂລຊີ ແລະ ການສື່ສານ;

2. ໂຈະ ຫຼື ປິດການເຊື່ອມຕໍ່ ແລະ ໃຫ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ເຫັນດີຈາກພາກສ່ວນທີ່ ກ່ຽວຂ້ອງ;

3. ປະລະໜ້າທີ່ ແລະ ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ;

4. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວກັບຜູ້ດຳເນີນທຸລະກິດ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 23 ຂໍ້ຫ້າມສຳລັບຜູ້ເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນພາຍໃນປະເທດ**

ຫ້າມຜູ້ໃຫ້ການເຊື່ອມຕໍ່ ແລະ ໃຫ້ບໍລິການ ມີພຶດຕິກຳ ດັ່ງນີ້:

1. ປ່ຽນແປງເສັ້ນທາງ ແລະ ຮູບແບບການເຊື່ອມຕໍ່ ຫຼື ສົ່ງສັນຍານຂໍ້ຄວາມສັ້ນຕ່າງປະເທດມາຜ່ານສູນ ກາງຂໍ້ຄວາມສັ້ນພາຍໃນສູນອິນເຕີເນັດແຫ່ງຊາດຫາຜູ້ໃຫ້ບໍລິການອື່ນ;

2. ເຊື່ອງອຳຂໍ້ມູນ, ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ບໍ່ໃຫ້ຄວາມຮ່ວມມືກັບ ເຈົ້າໜ້າທີ່ຂອງກະຊວງ ເຕັກໂນ ໂລຊີ ແລະ ການສື່ສານ ຫຼື ພາກສ່ວນທີ່ກ່ຽວຂ້ອງ;

3. ເປີດເຜີຍຂໍ້ມູນຂອງບຸກຄົນ ຫຼື ພາກສ່ວນອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;

4. ສົ່ງຂໍ້ຄວາມສັ້ນ ເພື່ອເປັນການລົບກວນ ຫຼື ເປັນໄພແກ່ສັງຄົມ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 24 ຂໍ້ຫ້າມສໍາລັບຜູ້ເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນເຂົ້າ-ອອກຕ່າງປະເທດ**

ຫ້າມຜູ້ເຊື່ອມຕໍ່ ແລະ ໃຫ້ບໍລິການ ມີພຶດຕິກໍາ ດັ່ງນີ້:

1. ເຮັດການເຊື່ອມຕໍ່ລະບົບຂໍ້ຄວາມສັ້ນເຂົ້າ-ອອກຕ່າງປະເທດ ໂດຍບໍ່ຜ່ານການລວມສູນການສື່ສານ;

2. ເຮັດສັນຍາການເຊື່ອມຕໍ່ຮ່ວມກັນໂດຍກົງ ໂດຍບໍ່ໄດ້ຮັບອະນຸຍາດ;

3. ປະຕິເສດໃຫ້ຄວາມຮ່ວມມືຕໍ່ກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ຖ່ວງດຶງການເຊື່ອມຕໍ່ໂດຍບໍ່ມີເຫດຜົນ;

4. ສົ່ງຂໍ້ຄວາມສັ້ນອອກຕ່າງປະເທດ ເພື່ອເປັນການລົບກວນ ຫຼື ເປັນໄພແກ່ບຸກຄົນທີ່ຢູ່ຕ່າງປະເທດ;

5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 25 ຂໍ້ຫ້າມສໍາລັບຜູ້ໃຊ້ບໍລິການທີ່ເຊື່ອມຕໍ່ກັບສູນອິນເຕີເນັດແຫ່ງຊາດ**

ຫ້າມຜູ້ໃຊ້ບໍລິການທີ່ເຊື່ອມຕໍ່ກັບສູນອິນເຕີເນັດແຫ່ງຊາດ ມີພຶດຕິກໍາ ດັ່ງນີ້:

1. ເຊື່ອມຕໍ່ ແລະ ນໍາໃຊ້ບໍລິການ ລະບົບສູນກາງຂໍ້ຄວາມສັ້ນພາຍໃນຂອງສູນອິນເຕີເນັດແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດ;

2. ນໍາໃຊ້ລະບົບສູນກາງຂໍ້ຄວາມສັ້ນພາຍໃນຂອງສູນອິນເຕີເນັດແຫ່ງຊາດ ໃນການສົ່ງຂໍ້ຄວາມສັ້ນທີ່ຜິດກົດໝາຍ ແລະ ລະບຽບການ;

3. ນໍາໃຊ້ລະບົບສູນກາງຂໍ້ຄວາມສັ້ນພາຍໃນຂອງສູນອິນເຕີເນັດແຫ່ງຊາດ ໃນການສົ່ງຂໍ້ຄວາມສັ້ນອອກຕ່າງປະເທດ;

4. ນໍາໃຊ້ລະບົບສູນກາງຂໍ້ຄວາມສັ້ນພາຍໃນຂອງສູນອິນເຕີເນັດແຫ່ງຊາດ ທີ່ບໍ່ໄດ້ລະບຸໄວ້ໃນເນື້ອໃນຂອງສັນຍາ;

5. ສ້າງຄວາມເສຍຫາຍ ຕໍ່ລະບົບສູນກາງຂໍ້ຄວາມສັ້ນພາຍໃນຂອງສູນອິນເຕີເນັດແຫ່ງຊາດ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 26 ຂໍ້ຫ້າມສໍາລັບ ຜູ້ໃຊ້ບໍລິການ**

ຫ້າມຜູ້ໃຊ້ບໍລິການ ມີພຶດຕິກໍາ ດັ່ງນີ້:

1. ນໍາໃຊ້ການບໍລິການຂໍ້ຄວາມສັ້ນຈາກຜູ້ໃຫ້ບໍລິການທີ່ບໍ່ໄດ້ຮັບອະນຸຍາດຈາກກະຊວງ ເຕັກໂນໂລຊີ ແລະ ການສື່ສານ;

2. ຕິດຕັ້ງ ຫຼື ເຊົ່າໃຊ້ລະບົບສູນກາງຂໍ້ຄວາມສັ້ນ ເພື່ອດໍາເນີນການບໍລິການຂໍ້ຄວາມສັ້ນ ໂດຍບໍ່ໄດ້ຮັບອະນຸຍາດ;

3. ກໍ່ກວນ ຫຼື ສ້າງຄວາມເສຍຫາຍ ຕໍ່ລະບົບສູນກາງຂໍ້ຄວາມສັ້ນຂອງຜູ້ໃຫ້ບໍລິການ;

4. ເມີນເສີຍຕໍ່ການຕັກເຕືອນ ຫຼື ກ່າວຟ້ອງໃນການນໍາໃຊ້ຂໍ້ຄວາມສັ້ນທີ່ຜິດກົດໝາຍ ແລະ ລະບຽບການ;

5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ການຄຸ້ມຄອງ

**ມາດຕາ 27 ອົງການຄຸ້ມຄອງວຽກງານການເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ຄຸ້ມຄອງວຽກງານການເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ສູນອິນເຕີເນັດແຫ່ງຊາດ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 28 ສິດ ແລະ ໜ້າທີ່ຂອງສູນອິນເຕີເນັດແຫ່ງຊາດ**

ໃນການຄຸ້ມຄອງວຽກງານການເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນ ສູນອິນເຕີເນັດແຫ່ງຊາດ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງການເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນຈາກລະບົບສູນກາງຂໍ້ຄວາມສັ້ນຂອງສູນອິນເຕີເນັດແຫ່ງຊາດ ໂດຍກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ອະນຸຍາດ;

2. ຄຸ້ມຄອງລະບົບສູນກາງຂໍ້ຄວາມສັ້ນທີ່ສູນອິນເຕີເນັດແຫ່ງຊາດ ເພື່ອເຊື່ອມຕໍ່ກັບລະບົບສູນກາງຂໍ້ຄວາມສັ້ນຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ;

3. ຄຸ້ມຄອງເສັ້ນທາງ ແລະ ຮູບແບບການເຊື່ອມຕໍ່ຂອງບັນດາຜູ້ໃຫ້ບໍລິການໂທລະຄົມມະນາຄົມ ໃຫ້ມີການລວມສູນການສື່ສານ;

4. ຄຸ້ມຄອງຄຸນນະພາບການໃຫ້ບໍລິການໃຫ້ໄດ້ຕາມມາດຕະຖານທີ່ກຳນົດໄວ້;

5. ຄຸ້ມຄອງຄວາມປອດໄພຂໍ້ມູນຂອງຂໍ້ຄວາມສັ້ນພາຍໃນປະເທດ ແລະ ເຂົ້າ-ອອກຕ່າງປະເທດຂອງຜູ້ໃຫ້ບໍລິການ ແລະ ເຄືອຂ່າຍຂອງພາກສ່ວນອື່ນ ບໍ່ໃຫ້ຖືກທຳລາຍ, ເກີດຄວາມເສຍຫາຍ, ປ່ຽນແປງ ຫຼື ຖືກໂຈລະກຳ;

6. ຄຸ້ມຄອງລະບົບກວດກາສັນຍານຂໍ້ຄວາມສັ້ນ (SMS Firewall);

7. ໂຈະການເຊື່ອມຕໍ່ຊົ່ວຄາວ ຫຼື ປິດຖາວອນກັບຜູ້ໃຫ້ບໍລິການຂໍ້ຄວາມສັ້ນ ໃນກໍລະນີ ທີ່ບໍ່ປະຕິບັດຕາມກົດໝາຍ ແລະ ລະບຽບການ;

8. ປິດການເຊື່ອມຕໍ່ທັນທີ ໃນກໍລະນີ ທີ່ການເຊື່ອມຕໍ່ເຄືອຂ່າຍຂໍ້ຄວາມສັ້ນມີການກະທົບຕໍ່ຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

9. ກຳນົດ, ຕິດຕາມ ແລະ ກວດກາ ມາດຕະຖານເຕັກນິກ ແລະ ຄຸນນະພາບການເຊື່ອມຕໍ່ຂອງຜູ້ຂໍເຊື່ອມຕໍ່ຂໍ້ຄວາມສັ້ນທັງພາຍໃນ ແລະ ຕ່າງປະເທດ;

10. ຕິດຕາມກວດກາເສັ້ນທາງການເຊື່ອມຕໍ່ ແລະ ໃຫ້ບໍລິການຂອງບັນດາຜູ້ໃຫ້ບໍລິການໂທລະຄົມມະນາຄົມເປັນແຕ່ລະໄລຍະ;

11. ຕິດຕາມກວດກາການຮັບ-ສົ່ງ ຂໍ້ມູນ ແລະ ບໍ່ໃຫ້ມີການບໍລິການຂໍ້ຄວາມສັ້ນທີ່ເປັນການລົບກວນ, ການໂຈມຕີ, ການສົ່ງ-ຮັບຂໍ້ຄວາມສັ້ນຜ່ານເສັ້ນທາງບໍ່ຖືກຕ້ອງ (Fraud), ການຫຼອກລວງຕໍ່ຜູ້ໃຊ້ບໍລິການ (Scam);

12. ຮັບປະກັນຄຸນນະພາບການໃຫ້ບໍລິການໃຫ້ໄດ້ຕາມມາດຕະຖານທີ່ກຳນົດໄວ້;

13. ຕິດຕາມກວດກາຂໍ້ຄວາມສັ້ນຈາກຜູ້ໃຊ້ທີ່ແອບອ້າງເລກໝາຍໂທລະສັບ ແລະ ປອມແປງເນື້ອໃນ ເພື່ອໂຈລະກຳຂໍ້ມູນທີ່ສ້າງຄວາມເສຍຫາຍໃຫ້ແກ່ຜູ້ໃຊ້ບໍລິການ (Spoofing Message);

14. ຕິດຕາມກວດກາສັນຍານຂໍ້ຄວາມສັ້ນ ເພື່ອໃຫ້ຮັບປະກັນຄວາມປອດໄພ;

15. ເກັບຄ່າທຳນຽມ ແລະ ຄ່າບໍລິການທາງຜ່ານ ລະບົບສູນກາງຂໍ້ຄວາມສັ້ນຂອງສູນອິນເຕີເນັດແຫ່ງຊາດ ຍົກເວັ້ນໄດ້ຮັບອະນຸຍາດຈາກກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໃນການສົ່ງຂໍ້ຄວາມສັ້ນ ໂດຍບໍ່ເສຍຄ່າເຊື່ອມຕໍ່;

16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 29 ການຈັດຕັ້ງປະຕິບັດ**

ມອບໃຫ້ ສູນອິນເຕີເນັດແຫ່ງຊາດ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 30 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງສີ່ສິບຫ້າວັນ ນັບແຕ່ວັນທີ່ໄດ້ລົງລາຍເຊັນປະກາດໃຊ້ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ.

ລັດຖະມົນຕີ

ກະຊວງເຕັກໂນໂລຊີ ແລະ ການສື່ສານ
ລັດຖະມົນຕີ

ບໍ່ວຽງຄຳ ວົງດາລາ